ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຊີ້ນຳລວມ
ອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນສູນກາງ

ເລກທີ 005/ຄອຄສ
ນະຄອນຫຼວງວຽງຈັນ, ວັນທີ 08 ເມສາ 2022

# ຄຳແນະນຳ

## ກ່ຽວກັບການຈັດຕັ້ງຜັນຂະຫຍາຍບາງເນື້ອໃນຂອງຄຳສັ່ງ ເລກທີ 12/ນຍ ວ່າດ້ວຍການອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021.
- ອີງຕາມ ຄຳສັ່ງ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019 ວ່າດ້ວຍການອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຳມະການຊີ້ນຳລວມ ອຳນວຍຄວາມສະດວກທາງດ້ານການຄ້າ ສະບັບເລກທີ 48/ນຍ, ລົງວັນທີ 26 ກໍລະກົດ 2018;
- ອີງຕາມ ເອກະສານລາຍງານ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 006/ຄອຄສ, ລົງວັນທີ 07 ກັນຍາ 2021.

**ຮອງນາຍົກລັດຖະມົນຕີ, ຫົວໜ້າຄະນະກຳມະການຊີ້ນຳ ລວມອຳນວຍຄວາມສະດວກທາງດ້ານການຄ້າ (ຄອຄສ) ອອກຄຳແນະນຳ:**

I. ຈຸດປະສົງ:

ການອອກຄຳແນະນຳລະອຽດຕື່ມບາງຈຸດ ໃນການຈັດຕັ້ງປະຕິບັດຄຳສັ່ງ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019 ວ່າດ້ວຍການອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ-ສົ່ງອອກການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າຢູ່ ສປປ ລາວ ເພື່ອເຮັດໃຫ້ບັນດາຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດໃຫ້ມີຄວາມເປັນເອກະພາບກັນ ແນໃສ່ ຫຼຸດເວລາການດຳເນີນງານ ໃຫ້ໄດ້ຢ່າງໜ້ອຍ 50%, ຄ່າໃຊ້ຈ່າຍ ແລະ ເອກະສານ ໃຫ້ໄດ້ຢ່າງໜ້ອຍ 30%.

II. ແນະນຳເພີ່ມເຕີມບາງຈຸດຄືດັ່ງນີ້:

**1. ການອອກໃບອະນຸຍາດ ແລະ ໃບຢັ້ງຢືນ ການເຄື່ອນຍ້າຍສິນຄ້າ ພາຍໃນປະເທດ:**

1.1 ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນໃຈກາງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ປັບປຸງລະບຽບການ ທີ່ຕິດພັນກັບການອອກໃບອະນຸຍາດ ແລະ ໃບຢັ້ງຢືນ ການເຄື່ອນຍ້າຍສິນຄ້າ ພາຍໃນປະເທດ, ລະຫວ່າງແຂວງ ຫາ ແຂວງ, ເມືອງ ຫາ ເມືອງ ເພື່ອຫຼຸດຜ່ອນຂັ້ນຕອນ, ເວລາ ແລະ ເອກະສານ ທີ່ບໍ່ຈຳເປັນ ແລະ ຊ້ຳຊ້ອນ, ລະອຽດດັ່ງນີ້:

1.1.1 ໄມ້ຈາກປ່າທຳມະຊາດ ແລະ ໄມ້ປູກ ຫຼື ໄມ້ຈາກສວນຟື້ນຟູ ປະເພດໄມ້ທ່ອນ, ໄມ້ຕັບ, ໄມ້ເລື່ອຍ ຕໍໄມ້, ປຸດໄມ້, ຖ່ານໄມ້, ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ ແມ່ນໃຫ້ກຳນົດການແບ່ງຂັ້ນຄຸ້ມຄອງ, ຂັ້ນຕອນ ແລະ ເອກະສານປະກອບ ສຳລັບການອອກໃບອະນຸຍາດ, ໃບຢັ້ງຢືນ ການເຄື່ອນຍ້າຍ ຢ່າງລະອຽດ.

1.1.2 ສັດ ແລະ ຜະລິດຕະພັນສັດ (ງົວ, ຄວາຍ, ມ້າ, ໝູ, ສັດປີກ, ແກະ, ແບ້ ແລະ ອື່ນໆ), ສັດນໍ້າ ແລະ ຜະລິດຕະພັນສັດນໍ້າ (ປາ, ກຸ້ງ, ປູ, ຫອຍ, ກົບ ແລະ ອື່ນໆ) ແມ່ນໃຫ້ມີລະບຽບການຢ່າງຊັດເຈນ ວ່າກໍລະນີໃດຕ້ອງມີໃບອະນຸຍາດເຄື່ອນຍ້າຍ ແລະ ກໍລະນີໃດ ສາມາດເຄື່ອນຍ້າຍໄດ້ເລີຍ. ສຳລັບພືດ ແລະ ຜະລິດຕະພັນພືດ (ເຂົ້າ, ກາເຟ, ໝາກຖົ່ວ, ມັນຕົ້ນ, ສາລີ, ໝາກໄມ້, ພືດຜັກ ແລະ ອື່ນໆ) ແມ່ນສາມາດເຄື່ອນຍ້າຍໄດ້ເລີຍ. ໃນກໍລະນີ ທີ່ມີການລະບາດຂອງພະຍາດສັດ ຫຼື ສັດຕູພືດ ແມ່ນບໍ່ອະນຸຍາດໃຫ້ເຄື່ອນຍ້າຍ ຢ່າງເດັດຂາດ.

1.1.3 ເຄື່ອງປ່າຂອງດົງທີ່ເປັນຢາ (ຊັບພະຍາກອນທຳມະຊາດ ທີ່ເປັນຢາ) ແມ່ນໃຫ້ກຳນົດບັນຊີຄຸ້ມຄອງໃຫ້ລະອຽດ ພ້ອມທັງປັບປຸງຂັ້ນຕອນ, ເອກະສານປະກອບ ສຳລັບການອອກໃບອະນຸຍາດ, ໃບຢັ້ງຢືນ ການເຄື່ອນຍ້າຍພາຍໃນ ແລະ ສົ່ງອອກ ແມ່ນໃຫ້ມີຄວາມເປັນເອກະພາບ ແລະ ບໍ່ຊໍ້າຊ້ອນກັນ ລະຫວ່າງ ຂະແໜງການ ກະສິກຳ ແລະ ປ່າໄມ້ ແລະ ຂະແໜງການສາທາລະນະສຸກ ເພື່ອຄວາມຊັດເຈນ ໃຫ້ແກ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດ.

2. <u>ການອອກໃບອະນຸຍາດ ແລະ ໃບຢັ້ງຢືນ ການສົ່ງອອກໄມ້:</u>

2.1 ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນໃຈກາງສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ປັບປຸງລະບຽບການ, ກົນໄກ ແລະ ຂັ້ນຕອນ ໃນການອອກໃບອະນຸຍາດຢັ້ງຢືນ ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ແນໃສ່ຫຼຸດຜ່ອນຂັ້ນຕອນ, ເວລາ ແລະ ຄ່າໃຊ້ຈ່າຍລົງ, ລະອຽດດັ່ງນີ້:

2.1.1 ຂັ້ນຕອນການຍື່ນຂໍອະນຸຍາດ, ການແຕ່ງຕັ້ງຄະນະກຳມະການລົງກວດກາ, ການໜີບກົ່ວຕູ້ສິນຄ້າ ແລະ ການເຊັນປິດບັນທຶກ ຈົນເຖິງ ການອອກໃບອະນຸຍາດ, ໃບຢັ້ງຢືນ ການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ຈາກປ່າທຳມະຊາດ ແລະ ຈາກສວນປູກ ຫຼື ສວນຟື້ນຟູ ແມ່ນໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການກະສິກຳ ແລະ ປ່າໄມ້ ປຶກສາຫາລື ແບ່ງຄວາມຮັບຜິດຊອບກັນ ໃຫ້ສຳເລັດ ໂດຍໄວ.

2.1.2 ຜະລິດຕະພັນ ເຄື່ອງເຟີນີເຈີໄມ້ ແລະ ເຄື່ອງຫັດຖະກຳໄມ້ ທີ່ມີການຊື້-ຂາຍ ຢູ່ງານວາງສະແດງ, ຫ້າງຮ້ານ, ຕະຫຼາດທາງເອເລັກໂຕຼນິກ (Electronic Marketplace) ແລະ ອື່ນໆ ແມ່ນໃຫ້ຄົ້ນຄວ້າ ແລະ ປັບປຸງລະບຽບ ແລະ ກົນໄກ ເພື່ອສົ່ງເສີມການສົ່ງອອກ ໂດຍການຫຼຸດຜ່ອນຂັ້ນຕອນ ແລະ ເອກະສານທີ່ບໍ່ຈຳເປັນ ສຳລັບການອອກໃບອະນຸຍາດ ແລະ ໃບຢັ້ງຢືນ ການສົ່ງອອກຂອງຂະແໜງການທີ່ກ່ຽວຂ້ອງ.

2.2 ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນໃຈກາງສົມທົບກັບກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ປັບປຸງລະບຽບການ, ກົນໄກ ແລະ ຂັ້ນຕອນໃນການສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ແນໃສ່ຫຼຸດຜ່ອນຂັ້ນຕອນ, ເວລາ ແລະ ຄ່າໃຊ້ຈ່າຍລົງ ລະອຽດດັ່ງນີ້:

2.2.1 ການຂໍອະນຸຍາດສົ່ງອອກ ແມ່ນໃຫ້ຍື່ນໃບສະເໜີ ຫາ ກະຊວງພະລັງງານ ແລະ ບໍ່ແຮ່ (ກົມຄຸ້ມຄອງບໍ່ແຮ່) ຫຼື ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງວຽງຈັນ ຕາມການແບ່ງຂັ້ນຄຸ້ມຄອງ.

2.2.2 ການສົ່ງອອກຕົວຈິງ (ກ່ອນເອົາແຮ່ທາດຂຶ້ນລົດ) ໃຫ້ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການແຕ່ງຕັ້ງຄະນະກຳມະການ ລົງກວດກາ, ໜີບກົ່ວຕູ້ສິນຄ້າ

ແລະ ເຊັນບົດບັນ ທຶກການກວດກາຮ່ວມກັນ ຊຶ່ງປະກອບມີຜູ້ຕາງໜ້າ ຈາກພະແນກພະລັງງານ ແລະ ບໍ່ແຮ່ ແລະ ພະແນກການເງິນ ພາກສ່ວນລະ 01 ທ່ານ ເທົ່ານັ້ນ ເຂົ້າຮ່ວມເປັນຄະນະ.

2.2.3 ສ້າງ ແລະ ປັບປຸງ ບົດບັນທຶກການກວດກາຮ່ວມກັນ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.

**3. <u>ການດຳເນີນການກວດກາຢູ່ດ່ານ:</u>**

3.1 ໃຫ້ກະຊວງການເງິນ ເປັນໃຈກາງສົມທົບກັບກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ປັບປຸງກົນໄກການກວດກາ ຜະລິດຕະພັນໄມ້ ແລະ ຜະລິດຕະພັນແຮ່ທາດ ໃນເວລາມາຮອດດ່ານບ່ອນສົ່ງອອກ, ລະອຽດດັ່ງນີ້:

3.1.1 ໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ກວດກາບັນດາເອກະສານປະກອບການແຈ້ງພາສີ ຕາມເຕັກນິກວິຊາສະເພາະ ແລະ ນຳໃຊ້ເຄື່ອງມືທັນສະໄໝ ເຊັ່ນ: ລະບົບ ASYCUDA, ສະແກນເນີ, ຊິງຊັ່ງ ແລະ ອື່ນໆ ໂດຍສົມທຽບກັບ ຈຳນວນ, ບໍລິມາດ ແລະ ນ້ຳໜັກ ລະຫວ່າງ ຊິງຊັ່ງຕົ້ນທາງ ແລະ ຊິງຊັ່ງປາຍທາງ.

3.1.2 ກໍລະນີມີຄວາມສົງໄສ ຫຼື ແຫຼ່ງຂ່າວທີ່ໜ້າເຊື່ອຖື ກ່ຽວກັບການລັກລອບສິນຄ້າ ທີ່ບໍ່ໄດ້ຮັບອະນຸຍາດ ໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ດຳເນີນການກວດກາສິນຄ້າຕົວຈິງ. ການກວດກາສິນຄ້າຕົວຈິງ ແຕ່ລະຄັ້ງ ຕ້ອງມີບົດບັນທຶກ ແລະ ລາຍງານຜົນການກວດກາ ຫາ ຂະແໜງການສາຍຕັ້ງຂອງຕົນ ເພື່ອພິຈາລະນາ.

3.1.3 ຄ່າໃຊ້ຈ່າຍທີ່ເກີດຂຶ້ນໃນການກວດກາສິນຄ້າຕົວຈິງ ເຊັ່ນ: ການເປີດຕູ້ສິນຄ້າ, ການແກະກໍ່, ການຍົກຍໍ ຫຼື ການຄ່ຽນຖ່າຍສິນຄ້າ ໃຫ້ປະຕິບັດຕາມແຕ່ລະກໍລະນີຄື: ຖ້າພົບເຫັນການລັກລອບ ໃຫ້ເຈົ້າຂອງສິນຄ້າ ຫຼື ຜູ້ສົ່ງອອກ ເປັນຜູ້ຮັບຜິດຊອບ ແລະ ຖືກດຳເນີນຄະດີຕາມກົດໝາຍ ແລະ ລະບຽບການ. ຖ້າບໍ່ພົບເຫັນການລັກລອບ ແມ່ນໃຫ້ເຈົ້າໜ້າທີ່ ຫຼື ຂະແໜງການ ທີ່ກ່ຽວຂ້ອງ ເປັນຜູ້ຮັບຜິດຊອບ ແລະ ດຳເນີນຕາມຂັ້ນຕອນການແຈ້ງພາສີ.

3.2 ໃຫ້ກະຊວງການເງິນ ເປັນໃຈກາງສົມທົບກັບກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານບໍລິຫານຄວາມສ່ຽງ ແລະ ກົນໄກປະສານງານ ເພື່ອອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ ສິນຄ້າ, ເຄື່ອງຂອງ ແລະ ຂັ້ນຕອນການດຳເນີນການກວດກາ ຮ່ວມກັນ ລະຫວ່າງໜ່ວຍງານທີ່ກ່ຽວຂ້ອງທີ່ປະຈຳຢູ່ດ່ານສາກົນ ຕາມບົດບັນທຶກຄວາມເຂົ້າໃຈທີ່ໄດ້ເຊັນຮ່ວມກັນ ເພື່ອຮັບປະກັນຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.

3.3 ໃຫ້ກະຊວງການເງິນ ສືບຕໍ່ພັດທະນາລະບົບແຈ້ງພາສີແບບອັດຕະໂນມັດ (ASYCUDA) ແລະ ລະບົບແຈ້ງພາສີແບບປະຕູດຽວແຫ່ງຊາດລາວ (Lao National Single Window: LNSW) ເປັນແຕ່ລະໄລຍະ ພ້ອມທັງຊຸກຍູ້ ແລະ ຂະຫຍາຍການນຳໃຊ້ລະບົບດັ່ງກ່າວ ໃຫ້ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າໃນການອອກອະນຸຍາດ, ການຢັ້ງຢືນ ການເກັບຄ່າທຳນຽມ, ຄ່າບໍລິການ ແລະ ການກວດປ່ອຍສິນຄ້າຢູ່ດ່ານສາກົນ ໃຫ້ຫຼາຍຂຶ້ນ ເທື່ອລະກ້າວ.

3.4 ໃຫ້ກະຊວງພາຍໃນ ເປັນເຈົ້າການສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງການເງິນ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ, ພາກສ່ວນກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕິດຕາມກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດດຳລັດ ວ່າດ້ວຍດ່ານຊາຍແດນ ແລະ ສະໜາມບິນສາກົນ ເລກທີ 558/ລບ, ລົງວັນທີ 31 ທັນວາ 2018 ໂດຍສະເພາະແມ່ນ ກິ່ງຈັກການຈັດຕັ້ງ, ຕຳແໜ່ງງານ, ບຸກຄະລາກອນ, ການກວດກາເອກະສານ ແລະ ສິນຄ້າ ນຳເຂົ້າ-ສົ່ງອອກ ຂອງບັນດາຂະແໜງການທີ່ປະຈຳດ່ານ.

**4. ການຕັ້ງຈຸດກວດກາຕາມເສັ້ນທາງ:**

4.1 ໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນໃຈກາງສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ ແລະ ປັບປຸງລະບຽບການ ທີ່ຕິດພັນກັບການກວດກາເອກະສານ ທີ່ພົວພັນກັບລົດ ແລະ ການຂັບຂີ່ ເຊັ່ນ: ໃບຂັບຂີ່, ໃບທະບຽນລົດ, ໃບຢັ້ງຢືນມາດຕະຖານເຕັກນິກລົດ ແລະ ໃບເສຍຄ່າທຳນຽມທາງປະຈຳປີ ຕາມກົດໝາຍຈະລາຈອນທາງບົກ ແລະ ກົດລະບຽບການສັນຈອນ ໂດຍບໍ່ໃຫ້ກວດກາສິນຄ້າ ແລະ ບໍ່ໃຫ້ຮຽກຮ້ອງເກັບຄ່າທຳນຽມໃດໆ. ກໍລະນີມີຄວາມສົງໃສ ຫຼື ມີແຫຼ່ງຂ່າວທີ່ໜ້າເຊື່ອຖື ກ່ຽວກັບການລັກລອບເຄື່ອນຍ້າຍຢາເສບຕິດ, ອາວຸດເສິກ ແລະ ອື່ນໆ ທີ່ຕິດພັນກັບການປ້ອງກັນຄວາມສະຫງົບ, ຄວາມໝັ້ນຄົງຂອງຊາດ ສາມາດກວດກາຕາມພາລະບົດບາດໄດ້.

4.2 ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ປະເມີນຄືນການຈັດຕັ້ງປະຕິບັດວຽກງານກວດການ້ຳໜັກ ແລະ ຂະໜາດຂອງລົດບັນທຸກ ຂອງສະຖານີຕິດຊັ່ງນ້ຳໜັກ ແນໃສ່ຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍ ສຳລັບການຂົນສົ່ງສິນຄ້າ ທີ່ບໍ່ຈຳເປັນ ແລະ ຊໍ້າຊ້ອນກັນ ຄື: ໃຫ້ມີໃບຢັ້ງຢືນການກວດກາຕິດຊັ່ງນ້ຳໜັກ ຈາກເຈົ້າໜ້າທີ່ປະຈຳສະຖານີຕິດຊັ່ງນ້ຳໜັກ ທີ່ໄດ້ຮັບອະນຸຍາດ ເທົ່ານັ້ນ ແລະ ບໍ່ໃຫ້ສະຖານີຕິດຊັ່ງລະຫວ່າງທາງ ດຳເນີນການກວດກາຕິດຊັ່ງຊໍ້າຊ້ອນຄືນອີກ ຍົກເວັ້ນກໍລະນີສົງໄສວ່າ ມີການເພີ່ມນ້ຳໜັກ ລະຫວ່າງທາງ. ນອກຈາກນີ້ແມ່ນໃຫ້ຄົ້ນຄວ້າ ແລະ ປັບປຸງລະບຽບການ ກ່ຽວກັບການນຳໃຊ້ລະບົບທັນສະໄໝ ເຂົ້າໃນການກວດກາຕິດຕາມນ້ຳໜັກລົດບັນທຸກ, ການປັບໄໝ ແລະ ການນຳໃຊ້ມາດຕະການ ຕໍ່ຜູ້ລະເມີດທີ່ຂົນສົ່ງນ້ຳໜັກເກີນໃຫ້ມີຄວາມເປັນເອກະພາບກັນ.

4.3 ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ ແລະ ກະຊວງກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ແນະນຳເຈົ້າໜ້າທີ່ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ເຊັ່ນ: ເຈົ້າໜ້າທີ່ກວດກາການຄ້າ, ເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ປາບປາມການລັກລອບໜີພາສີ, ເຈົ້າໜ້າທີ່ສ່ວຍສາອາກອນ, ເຈົ້າໜ້າທີ່ປ່າໄມ້ ແລະ ເຈົ້າໜ້າທີ່ອື່ນ ກ່ຽວກັບການຕັ້ງຈຸດກວດກາຕາມເສັ້ນທາງ ເພື່ອສະກັດກັ້ນການລັກລອບເຄື່ອນຍ້າຍສິນຄ້າ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແລະ ປ້ອງກັນການແຜ່ລະບາດຂອງພະຍາດຂອງຄົນ, ພືດ ແລະ ສັດ ດັ່ງນີ້:

- 4.3.1 ໃນກໍລະນີມີຄວາມຈຳເປັນ ສາມາດຕັ້ງຈຸດກວດກາສະເພາະກິດຊົ່ວຄາວ ຢູ່ຕາມເສັ້ນທາງ ແຕ່ຕ້ອງໄດ້ຮັບການອະນຸມັດຈາກ ທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ເສຍກ່ອນ, ໃຫ້ກຳນົດເວລາຊັດເຈນ. ຖ້າຈຸດກວດກາສະເພາະກິດໃດ ທີ່ບໍ່ໄດ້ຮັບອະນຸມັດ ແມ່ນໃຫ້ຍຸບເລີກ.
- 4.3.2 ໃນກໍລະນີມີຄວາມສົງໄສ ຫຼື ແຫຼ່ງຂ່າວ ທີ່ໜ້າເຊື່ອຖື ແບບຮີບດ່ວນ ສາມາດກວດກາແບບສະເພາະກິດ ເຄື່ອນທີ່ຊົ່ວຄາວ.
- 4.3.3 ການກວດກາແຕ່ລະຄັ້ງ ຕ້ອງບໍ່ສ້າງອຸປະສັກໃຫ້ແກ່ການເຄື່ອນຍ້າຍສິນຄ້າ, ບໍ່ໃຫ້ກວດກາສິນຄ້າ ທີ່ບໍ່ຕິດພັນກັບໜ້າວຽກຂອງຕົນ ແລະ ບໍ່ໃຫ້ເກັບຄ່າທຳນຽມໃດໆ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ວາງອອກ.
- 4.3.4 ພາຍຫຼັງສຳເລັດການກວດກາ ໃຫ້ລາຍງານຜົນການກວດກາ ຫາ ທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ຂະແໜງການສາຍຕັ້ງຂອງຕົນ ເພື່ອຊາບ.

4.4 ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ໃນນາມຜູ້ປະຈຳການ ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນສູນກາງ ແລະ ຂັ້ນແຂວງ ເປັນເຈົ້າການຕິດຕາມ ແລະ ຊຸກຍູ້ ການຜັນຂະຫຍາຍແຈ້ງການສະບັບນີ້ ແລ້ວລາຍງານຕໍ່ລັດຖະບານ ເປັນແຕ່ລະໄລຍະ.

III. ວິທີຈັດຕັ້ງປະຕິບັດ:

1. ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນໃຈກາງສົມທົບກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງເຜີຍແຜ່ ກ່ຽວກັບການຈັດຕັ້ງຜັນຂະຫຍາຍບາງເນື້ອໃນຂອງຄຳສັ່ງ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019 ວ່າດ້ວຍການອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ-ສົ່ງອອກການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ ໃຫ້ໄດ້ຮັບຜົນດີ.

2. ໃຫ້ບັນດາກະຊວງກ່ຽວຂ້ອງ ທີ່ໄດ້ຮັບການມອບໝາຍນຳເອົາຄຳແນະນຳສະບັບນີ້ ໄປຈັດຕັ້ງປະຕິບັດເປັນອັນລະອຽດ ຕາມແຕ່ລະໜ້າວຽກທີ່ຕິດພັນກັບຂະແໜງການຕົນ ໃຫ້ມີຜົນສໍາເລັດເປັນຢ່າງດີ.

3. ມອບໃຫ້ກອງເລຂາ ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຕິດຕາມ, ຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ແລ້ວລາຍງານຫົວໜ້າຄະນະກຳມະການຊີ້ນຳ ລວມອຳນວຍຄວາມສະດວກທາງດ້ານການຄ້າ (ຄອຄສ) ເພື່ອຊາບ ແລະ ມີທິດຊີ້ນຳ ເປັນປົກກະຕິ.

4. ໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຫາກພົບເຫັນຄວາມຫຍຸ້ງຍາກ ໃຫ້ພາກສ່ວນກ່ຽວຂ້ອງລາຍງານຕໍ່ກອງເລຂາ ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ເພື່ອລາຍງານຂໍທິດຊີ້ນຳຕໍ່ ຫົວໜ້າຄະນະກຳມະການຊີ້ນຳ ລວມອຳນວຍຄວາມສະດວກທາງດ້ານການຄ້າ (ຄອຄສ) ຕາມຂັ້ນຕອນ ເພື່ອແກ້ໄຂໃຫ້ທັນເວລາ.

5. ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮອງນາຍົກລັດຖະມົນຕີ,
ຫົວໜ້າຄະນະກຳມະການຊີ້ນຳລວມ
ອຳນວຍຄວາມສະດວກທາງດ້ານການຄ້າ

ສອນໄຊ ສີພັນດອນ

<u>ບ່ອນນຳສົ່ງ:</u>

1. ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ, ທ່ານລະ 01 ສະບັບ
2. ທ່ານ ຫົວໜ້າຫ້ອງວ່າການສູນກາງພັກ 01 ສະບັບ
3. ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ 01 ສະບັບ
4. ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ 01 ສະບັບ
5. ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ 01 ສະບັບ
6. ທ່ານ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ 01 ສະບັບ
7. ທ່ານ ລັດຖະມົນຕີກະຊວງການເງິນ 01 ສະບັບ
8. ທ່ານ ລັດຖະມົນຕີກະຊວງສາທາລະນະສຸກ 01 ສະບັບ
9. ທ່ານ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ 01 ສະບັບ
10. ຄະນະ ຫສນຍ ທ່ານລະ 01 ສະບັບ
11. ກົມເລຂາ, ຫສນຍ 01 ສະບັບ
12. ກົມຄົ້ນຄວ້າ-ສັງລວມ, ຫສນຍ 01 ສະບັບ
13. ສຳເນົາ 01 ສະບັບ